ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ
ຄະນະປະຈຳ

ເລກທີ 03 /ຄປຈ
ນະຄອນຫຼວງວຽງຈັນ, ວັນທີ 14 / 02 / 23

# ຄຳແນະນຳ
# ຂອງ ຄະນະປະຈຳສະພາແຫ່ງຊາດ
# ວ່າດ້ວຍ ການຕິດຕາມ ກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ
# ຂົງເຂດຍຸຕິທຳ 04 ສະບັບ

ເຖິງ: ປະທານສານປະຊາຊົນສູງສຸດ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ບັນດາປະທານກຳມາທິການຂອງສະພາແຫ່ງຊາດ, ເລຂາທິການສະພາແຫ່ງຊາດ, ປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ປະທານສະພາປະຊາຊົນຂັ້ນແຂວງ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ

– ອີງຕາມ ກົດໝາຍວ່າດ້ວຍ ການປັບປຸງບາງມາດຕາຂອງ ກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍ ສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020;
– ອີງຕາມ ກົດໝາຍວ່າດ້ວຍ ການຕິດຕາມ ກວດກາຂອງ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 12/ສພຊ, ລົງວັນທີ 15 ພະຈິກ 2016;
– ອີງຕາມ ກົດໝາຍວ່າດ້ວຍ ການສ້າງນິຕິກຳ ສະບັບເລກທີ 06/ສພຊ, ລົງວັນທີ 16 ພະຈິກ 2021, ມາດຕາ 124 ການປະເມີນຜົນການຈັດຕັ້ງປະຕິບັດນິຕິກາ ແລະ ມາດຕາ 125 ອົງການປະເມີນຜົນການຈັດຕັ້ງປະຕິບັດນິຕິກຳ;
– ອີງຕາມ ມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍ ການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ສະບັບເລກທີ 53/ຄປຈ, ລົງວັນທີ 23 ສິງຫາ 2022;
– ອີງຕາມ ການຕົກລົງ ຂອງ ກອງປະຊຸມຄະນະປະຈຳ ສະພາແຫ່ງຊາດ ຄັ້ງວັນທີ 11 ພະຈິກ 2022.

ເພື່ອເຮັດໃຫ້ການປະເມີນຜົນການຈັດຕັ້ງປະຕິບັດບັນດາກົດໝາຍດັ່ງກ່າວ ໄດ້ດຳເນີນໄປຢ່າງຖືກຕ້ອງ, ພາວະວິໄສ, ມີປະສິດທິພາບ ແລະ ປະສິດທິຜົນ

## ຄະນະປະຈຳສະພາແຫ່ງຊາດ ອອກຄຳແນະນຳ:

### 1. ຄວາມສຳຄັນ ແລະ ຄວາມຈຳເປັນຂອງການປະເມີນ

ນັບແຕ່ໄດ້ສະຖາປະນາເປັນ ສປປ ລາວ ເປັນຕົ້ນມາ ລັດເຮົາໄດ້ປະກາດໃຊ້ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍໃນຂົງເຂດຍຸຕິທຳເປັນຈຳນວນຫຼາຍສະບັບ ຊຶ່ງໄດ້ກາຍເປັນເຄື່ອງມືທີ່ສຳຄັນຂອງລັດ ໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ, ແກ້ໄຂຂໍ້ຂັດແຍ່ງໃນສັງຄົມ, ເປັນບ່ອນອີງ ແລະ ເຄື່ອງມືໃນການປົກປ້ອງສິດ ແລະ ຜົນປະໂຫຍດ

ຂອງລັດ, ລວມໝູ່, ນິຕິບຸກຄົນ ແລະ ບຸກຄົນ, ສ້າງເງື່ອນໄຂອໍານວຍຄວາມສະດວກ ໃຫ້ແກ່ການດຶງດູດການລົງທຶນພາຍໃນ ແລະ ຕ່າງປະເທດ ເພື່ອພັດທະນາເສດຖະກິດ-ສັງຄົມ. ແຕ່ພ້ອມດຽວກັນນັ້ນ ການຈັດຕັ້ງປະຕິບັດລັດຖະທໍາມະນູນ ແລະ ກົດໝາຍ ໃນຂົງເຂດຍຸຕິທໍາ ຍັງມີຫຼາຍບັນຫາ ທີ່ເລັ່ງທວງໃຫ້ພວກເຮົາ ຕ້ອງກວດກາ ແລະ ປັບປຸງໃຫ້ດີກວ່າເກົ່າ ແນໃສ່ເຮັດໃຫ້ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ດ້ວຍກົດໝາຍ ມີຜົນສັກສິດ ແລະ ເຂັ້ມງວດຫຼາຍຂຶ້ນ. ສະນັ້ນ, ຄະນະປະຈໍາສະພາແຫ່ງຊາດ ຈຶ່ງໄດ້ຕົກລົງໃຫ້ ດໍາເນີນການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍໃນຂົງເຂດຍຸຕິທໍາ ເພື່ອນໍາເຂົ້າລາຍງານຕໍ່ກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ໂດຍເນັ້ນໃສ່ 04 ກົດໝາຍ ຄື: ກົດໝາຍວ່າດ້ວຍ ສານປະຊາຊົນ, ກົດໝາຍວ່າດ້ວຍ ອົງການໄອຍະການປະຊາຊົນ, ກົດໝາຍວ່າດ້ວຍ ການດໍາເນີນຄະດີແພ່ງ ແລະ ກົດໝາຍວ່າດ້ວຍ ການດໍາເນີນຄະດີອາຍາ.

ຜ່ານການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທໍາ ໃນໄລຍະເດືອນກັນຍາ ແລະ ເດືອນຕຸລາ 2022 ຜ່ານມາສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ໄດ້ລາຍງານຕໍ່ກອງປະຊຸມຄະນະປະຈໍາສະພາແຫ່ງຊາດ ປະຈໍາເດືອນ ພະຈິກ 2022 ເຫັນວ່າ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ 04 ສະບັບດັ່ງກ່າວ ແມ່ນຫາກໍເລີ່ມຈັດຕັ້ງປະຕິບັດ, ຊຶ່ງຍັງບໍ່ທັນສາມາດຈັດຕັ້ງການປະເມີນໄດ້ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ຕາມແຜນການທີ່ວາງໄວ້. ສະນັ້ນ, ເພື່ອຮັບປະກັນທາງດ້ານເນື້ອໃນຂອງການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທໍາ ໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ທັນກັບເວລາ, ຄະນະປະຈໍາສະພາແຫ່ງຊາດຈຶ່ງໄດ້ອອກຄໍາແນະນໍາ ສະບັບນີ້ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດຢ່າງເປັນເອກະພາບໃນທົ່ວປະເທດ.

## 2. ຈຸດປະສົງ ແລະ ລະດັບຄາດໝາຍຂອງການປະເມີນ

ການປະເມີນຜົນການຈັດຕັ້ງປະຕິບັດ ກົດໝາຍຂ້າງເທິງນີ້ ແມ່ນແນໃສ່:

**2.1.** ເພື່ອກວດກາ ແລະ ຊຸກຍູ້ ສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທໍາ ໃຫ້ ສໍາເລັດຕາມແຜນການ, ມີປະສິດທິພາບ ແລະ ປະສິດທິຜົນ;

**2.2.** ເພື່ອເຮັດໃຫ້ບົດສະຫຼຸບຕີລາຄາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທໍາ 04 ສະບັບທີ່ຈະນໍາລາຍງານຕໍ່ກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ມີເນື້ອໃນ ຄົບຖ້ວນ, ຖືກຕ້ອງ, ສອດຄ່ອງ ຕາມກົດໝາຍ ແລະ ແທດເໝາະກັບຕົວຈິງ;

**2.3.** ເພື່ອຖອດຖອນບົດຮຽນ ໃຫ້ແກ່ການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດຕ່າງໆ ໃນຕໍ່ໜ້າ.

## 3. ເນື້ອໃນການປະເມີນ

**3.1. ກົດໝາຍທີ່ຈະດໍາເນີນການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດຄັ້ງນີ້ ມີຈໍານວນ 04 ສະບັບ ຄື:**

3.1.1. ກົດໝາຍວ່າດ້ວຍ ສານປະຊາຊົນ ສະບັບປີ 2017;

3.1.2. ກົດໝາຍວ່າດ້ວຍ ອົງການໄອຍະການປະຊາຊົນ ສະບັບປີ 2017;

3.1.3. ກົດໝາຍວ່າດ້ວຍ ການດໍາເນີນຄະດີແພ່ງ ສະບັບປີ 2012;

3.1.4. ກົດໝາຍວ່າດ້ວຍ ການດໍາເນີນຄະດີອາຍາ ສະບັບປີ 2017.

**3.2. ເນື້ອໃນການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ໃຫ້ເລັ່ງໃສ່ ດັ່ງນີ້:**

**3.2.1. ເນື້ອໃນລວມ**

**3.2.1.1. ສັງລວມຫຍໍ້ຄວາມເປັນມາຂອງກົດໝາຍ;**

**3.2.1.2. ຕີລາຄາຜົນຂອງການໂຄສະນາ ເຜີຍແຜ່ ແລະ ຍົກສູງສະຕິເຄົາລົບກົດໝາຍ:**

- ການໂຄສະນາເຜີຍແຜ່ກົດໝາຍ ທົ່ວເຖິງຖັນແຖວພະນັກງານ ຂອງ ສານປະຊາຊົນ ແລະ ອົງການໄອຍະການປະຊາຊົນ ແນວໃດ ?

- ການໂຄສະນາເຜີຍແຜ່ກົດໝາຍ ທົ່ວເຖິງອົງການທີ່ຮັບຜິດຊອບໃນການດຳເນີນຄະດີ ແນວໃດ ?

- ການໂຄສະນາເຜີຍແຜ່ກົດໝາຍ ທົ່ວເຖິງສັງຄົມ ແລະ ປະຊາຊົນ ແນວໃດ ?

**3.2.1.3 ການຜັນຂະຫຍາຍມາດຕາຂອງກົດໝາຍອອກເປັນນິຕິກຳໃຕ້ກົດໝາຍ:**

- ໄດ້ຜັນຂະຫຍາຍມາດຕາຂອງກົດໝາຍອອກເປັນນິຕິກຳໃຕ້ກົດໝາຍ ໄດ້ຈັກສະບັບ, ມີສະບັບໃດແດ່ ?

- ນິຕິກຳໃຕ້ກົດໝາຍເຫຼົ່ານັ້ນ ມີຄວາມສອດຄ່ອງ ຫຼື ຂັດກັບກົດໝາຍບໍ່ ?

**3.2.1.4 ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກ ໃນການຈັດຕັ້ງປະຕິບັດແຕ່ລະກົດໝາຍ ມີຫຍັງແດ່ ?**

**3.2.1.5. ການຈັດຕັ້ງປະຕິບັດແຕ່ລະກົດໝາຍ ມີຜົນສຳເລັດຕົວຈິງ, ມີດ້ານດີ, ດ້ານອ່ອນ ຄືແນວໃດ ? ສາເຫດຕົ້ນຕໍ ທີ່ພາໃຫ້ ມີດ້ານດີ, ດ້ານອ່ອນ, ບົດຮຽນທີ່ຖອດຖອນໄດ້ ແລະ ທິດທາງແກ້ໄຂໃນຕໍ່ໜ້າ ມີຫຍັງແດ່ ? ກ່ຽວກັບການປັບປຸງກົດໝາຍ ແລະ ການຈັດຕັ້ງປະຕິບັດ ແຕ່ລະກົດໝາຍ ຫຼື ບັນຫາລວມມີຫຍັງແດ່ ?**

**3.2.2. ເນື້ອໃນສະເພາະ**

ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍແຕ່ລະສະບັບໃຫ້ເນັ້ນໃສ່ບາງມາດຕາ ດັ່ງນີ້:

**3.2.1. ກົດໝາຍວ່າດ້ວຍ ສານປະຊາຊົນ ໃຫ້ລົງເລິກປະເມີນ 13 ມາດຕາຄື:** ມາດຕາ 3, 10, 11, 12, 13, 18, 23, 25, 27, 44, 45, 48, 49 ແລະ ມາດຕາອື່ນໆທີ່ເຫັນວ່າ ມີຄວາມຈຳເປັນ;

**3.2.2. ກົດໝາຍວ່າດ້ວຍ ອົງການໄອຍະການປະຊາຊົນ ໃຫ້ລົງເລິກປະເມີນ 10 ມາດຕາຄື:** ມາດຕາ 7, 15, 23, 31, 33, 39, 40, 41, 51, 52 ແລະ ມາດຕາອື່ນໆທີ່ເຫັນວ່າ ມີຄວາມຈຳເປັນ;

**3.2.3. ກົດໝາຍວ່າດ້ວຍ ການດຳເນີນຄະດີແພ່ງ ໃຫ້ລົງເລິກປະເມີນ 41 ມາດຕາຄື:** ມາດຕາ 3, 12, 18, 21, 22, 30, 32, 36, 42, 59, 60, 67, 72, 73, 74, 82, 102, 103, 109, 120, 130 ,131, 132, 156, 178, 184, 186, 190, 251, 254, 256, 262, 274, 279, 286, 297, 361, 362, 363, 365, 366 ແລະ ມາດຕາອື່ນໆທີ່ເຫັນວ່າ ມີຄວາມຈຳເປັນ;

**3.2.4. ກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ ໃຫ້ລົງເລິກປະເມີນ 19 ມາດຕາຄື:** ມາດຕາ 90, 91, 108, 110, 111, 121, 139, 142, 143, 146, 148,149, 151, 152, 157, 220, 239, 246, 261 ແລະ ມາດຕາອື່ນໆທີ່ເຫັນວ່າ ມີຄວາມຈຳເປັນ;

## 4. ທິດທາງການປະເມີນ

ການປະເມີນຜົນການຈັດຕັ້ງປະຕິບັດ 04 ກົດໝາຍດັ່ງກ່າວ ໃຫ້ປະຕິບັດຕາມທິດທາງ ດັ່ງນີ້:

4.1. ສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ເປັນເຈົ້າການຈັດຕັ້ງປະຕິບັດການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍເຫຼົ່ານັ້ນ ຕາມມາດຕາ 124 ແລະ 125 ກົດໝາຍວ່າດ້ວຍ ການສ້າງນິຕິກຳ, ສ່ວນສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ແມ່ນປະຕິບັດພາລະບົດບາດຕິດຕາມ ກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍດັ່ງກ່າວ. ຜົນຂອງການປະເມີນຜົນການຈັດຕັ້ງປະຕິບັດບັນດາກົດໝາຍ ໃຫ້ລາຍງານຫາ ຄະນະປະຈຳສະພາແຫ່ງຊາດ ຢ່າງຊ້າບໍ່ໃຫ້ກາຍວັນທີ 05 ພຶດສະພາ 2023;

4.2. ຄະນະຮັບຜິດຊອບ ຊີ້ນຳການຕິດຕາມ ກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ຂອງສະພາແຫ່ງຊາດ ຕ້ອງເປັນເຈົ້າການປະສານສົມທົບກັບ ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ ແລະ

ພາກສ່ວນທີ່ກ່ຽວຂ້ອງ ໃນການດຳເນີນການປະເມີນ. ພ້ອມກັນນັ້ນ, ກໍໃຫ້ຄົ້ນຄວ້າ, ເກັບກຳຂໍ້ມູນຕ່າງໆ ທີ່ພົວພັນກັບການຈັດຕັ້ງປະຕິບັດບັນດາກົດໝາຍດັ່ງກ່າວ ໃນບັນດາຂະແໜງການ, ອົງການຂັ້ນສູນກາງ ແລະ ທ້ອງຖິ່ນ;

4.3. ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງຕ່າງໆ ແລະ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເປັນເຈົ້າການ ເຂົ້າຮ່ວມ, ຕິດຕາມ ກວດກາ ແລະ ຊຸກຍູ້ການດຳເນີນການປະເມີນ ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

4.4. ຄະນະຮັບຜິດຊອບ ຊີ້ນຳການຕິດຕາມ ກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ຂອງສະພາແຫ່ງຊາດ ໃຫ້ເພີ່ມທະວີການປະສານສົມທົບກັບ ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ ແລະ ພາກສ່ວນທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນ ໃນການຈັດຕັ້ງປະຕິບັດວຽກງານການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ໃຫ້ກົມກຽວກັນ, ແທດເຖິງຕົວຈິງ, ມີປະສິດທິພາບ ແລະ ປະສິດທິຜົນ.

## 5. ຮູບການ ແລະ ວິທີການ

ຮູບການ ແລະ ວິທີການປະເມີນ ໃຫ້ດຳເນີນໄປ ດັ່ງນີ້:

5.1. ຈັດກອງປະຊຸມ ໃນຮູບແບບເຊິ່ງໜ້າ ຊຶ່ງດຳເນີນການດ້ວຍວິທີການ:

5.1.1. ປະທານກ່າວເປີດກອງປະຊຸມ

5.1.2. ສານປະຊາຊົນ ແລະ ອົງການໄອຍະການປະຊາຊົນ ລາຍງານຜົນ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ຈຳນວນ 04 ສະບັບ ຕາມຄວາມຮັບຜິດຊອບຂອງຕົນ ຕໍ່ກອງປະຊຸມ;

5.1.3. ປະທານກອງປະຊຸມເຈາະຈີ້ມ;

5.1.4. ຜູ້ເຂົ້າຮ່ວມກອງປະຊຸມ ຄົ້ນຄວ້າ ແລະ ປະກອບຄຳເຫັນ;

5.1.5. ສານປະຊາຊົນ ແລະ ອົງການໄອຍະການປະຊາຊົນ ຊີ້ແຈ້ງ ແລະ ອະທິບາຍ;

5.1.6. ປະທານກອງປະຊຸມສັງລວມຄຳເຫັນ, ໃຫ້ທິດຊີ້ນຳ ແລະ ກ່າວປິດກອງປະຊຸມ.

5.2. ການເກັບກຳຂໍ້ມູນດ້ວຍການສອບຖາມເປົ້າໝາຍ ໂດຍຜ່ານສື່ມວນຊົນ, ສົ່ງໃຫ້ບັນດາອົງການ, ມະຫາວິທະຍາໄລ, ສະຖາບັນ, ປະຊາຊົນທົ່ວໄປໃນທົ່ວສັງຄົມ ເພື່ອປະເມີນ, ຊຶ່ງດຳເນີນການດ້ວຍວິທີການ ດັ່ງນີ້:

5.2.1. ສ້າງຮ່າງແບບສອບຖາມ ຫຼື ຄຳຖາມເຈາະຈີ້ມ;

5.2.2. ແຈກຢາຍແບບສອບຖາມໃຫ້ເປົ້າໝາຍ;

5.2.3. ສັງລວມຂໍ້ມູນ.

## 6. ບາດກ້າວດຳເນີນການຕິດຕາມກວດກາ

### 6.1. ບາດກ້າວທີໜຶ່ງ : ການກະກຽມຄວາມພ້ອມວຽກງານຮອບດ້ານ

6.1.1. ກະກຽມເອກະສານສຳຄັນຕ່າງໆ ເຊັ່ນ: ຮ່າງຄຳແນະນຳ, ແຜນການ, ແຕ່ງຕັ້ງຄະນະຮັບຜິດຊອບ, ຮ່າງຄຳຖາມເຈາະຈີ້ມ, ຮ່າງແບບສອບຖາມ, ແຈ້ງການ ແລະ ເອກະສານອື່ນໆ;

6.1.2. ຈັດກອງປະຊຸມປຶກສາຫາລື;

6.1.3. ນຳສົ່ງ ຄຳແນະນຳ, ແຜນການ, ຄຳຖາມເຈາະຈີ້ມ, ແຈ້ງການ ແລະ ເອກະສານ ຕ່າງໆ ໃຫ້ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອດຳເນີນການປະເມີນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທຳ ຈຳນວນ 04 ສະບັບ;

6.1.4. ປະສານສົມທົບກັບ ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ ແລະ ບັນດາພາກສ່ວນທີ່ກ່ຽວຂ້ອງ ໃນການຕິດຕາມກວດກາ.

### 6.2. ບາດກ້າວທີສອງ: ດຳເນີນການຕິດຕາມກວດກາ ແລະ ເກັບກຳຂໍ້ມູນ ຢູ່ ສູນກາງ ແລະ ທ້ອງຖິ່ນ

**6.2.1. ປະສານສົມທົບ, ຕິດຕາມ, ຊຸກຍູ້ ແລະ ເຂົ້າຮ່ວມການປະເມີນ:**

ຄະນະຮັບຜິດຊອບ ເຂົ້າຮ່ວມ, ຊຸກຍູ້ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທຳ ຈຳນວນ 04 ສະບັບ ຢູ່ ສູນກາງ ແລະ ທ້ອງຖິ່ນ ຮ່ວມກັບ ສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ;

ສົ່ງແບບຟອມສອບຖາມ ໃຫ້ບັດດາສະຖາບັນການສຶກສາ, ອົງການຈັດຕັ້ງສັງຄົມ, ນັກຮຽນຮູ້ປັນຍາຊົນ, ບັນດາພາກສ່ວນທີ່ກ່ຽວຂ້ອງ ແລະ ປະຊາຊົນ.

**6.2.2. ຈັດກອງປະຊຸມ ຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທຳ ຈຳນວນ 04 ສະບັບ:**

**6.2.2.1. ທ້ອງຖິ່ນ**

ຄະນະຮັບຜິດຊອບ ຈັດກອງປະຊຸມຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທຳ ຈຳນວນ 04 ສະບັບ ແລະ ເກັບກຳຂໍ້ມູນ ຢູ່ 03 ຈຸດ, ຊຶ່ງແຕ່ລະຈຸດດຳເນີນເປັນເວລາ 02 ວັນ ໂດຍມີເປົ້າໝາຍເຂົ້າຮ່ວມ ຄື: ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ; ຄະນະປະຈຳສະພາປະຊາຊົນຂັ້ນແຂວງ; ບັນດາປະທານຄະນະກຳມະການສະພາປະຊາຊົນຂັ້ນແຂວງ; ເຈົ້າແຂວງ ຫຼື ຮອງເຈົ້າແຂວງ ແລະ ຫ້ອງວ່າການປົກຄອງແຂວງ; ປະທານສານປະຊາຊົນ ພາກ, ແຂວງ, ເຂດ; ຫົວໜ້າອົງການໄອຍະການປະຊາຊົນ ພາກ, ແຂວງ, ເຂດ; ຫົວໜ້າພະແນກຍຸຕິທຳແຂວງ, ຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ຫົວໜ້າກອງບັນຊາການທະຫານແຂວງ, ປະທານອົງການກວດກາລັດແຂວງ, ປະທານສະຫະພັນນັກຮົບເກົ່າລາວແຂວງ, ປະທານກຳມະບານລາວແຂວງ, ປະທານສະຫະພັນແມ່ຍິງລາວແຂວງ, ກອງປະຕິບັດຄຳຕັດສິນຂອງສານປະຈຳແຂວງ ແລະ ຫົວໜ້າຫ້ອງການສະພາທະນາຍຄວາມ ປະຈຳແຂວງ, ຊຶ່ງລາຍລະອຽດຂອງແຕ່ລະຈຸດ ມີດັ່ງນີ້:

- ຈຸດທີໜຶ່ງ ຈັດຢູ່ແຂວງ ອຸດົມໄຊ ປະກອບມີແຂວງ ອຸດົມໄຊ, ບໍ່ແກ້ວ, ຜົ້ງສາລີ ແລະ ຫຼວງນ້ຳທາ;
- ຈຸດທີສອງ ຈັດຢູ່ແຂວງ ເຊກອງ ປະກອບມີແຂວງ ເຊກອງ, ສາລະວັນ ແລະ ອັດຕະປື;
- ຈຸດທີສາມ ຈັດຢູ່ແຂວງ ບໍລິຄຳໄຊ ປະກອບມີແຂວງ ບໍລິຄຳໄຊ, ຊຽງຂວາງ, ຫົວພັນ ແລະ ໄຊສົມບູນ.

ສຳລັບແຂວງອື່ນທີ່ບໍ່ໄດ້ເຂົ້າຮ່ວມ ແມ່ນມອບໃຫ້ ປະທານຄະນະສະມາຊິກປະຈຳເຂດເລືອກຕັ້ງ ເປັນຜູ້ຊີ້ນຳໃນການຕິດຕາມກວດກາ ຢູ່ພາຍໃນແຂວງຂອງຕົນ ແລ້ວສັງລວມລາຍງານຜົນຂອງການຕິດຕາມກວດກາ ໃຫ້ຄະນະຮັບຜິດຊອບ ກ່ອນວັນທີ 25 ເມສາ 2023;

**6.2.2.2. ສູນກາງ ຈັດຢູ່ແຂວງ ວຽງຈັນ ໃນລະຫວ່າງວັນທີ 11-12 ພຶດສະພາ 2023**

ເປົ້າໝາຍເຂົ້າຮ່ວມມີ: ປະທານ, ຮອງປະທານ ຂອງ ສານປະຊາຊົນສູງສຸດ; ຫົວໜ້າ, ຮອງຫົວໜ້າ ກົມ, ຄະນະສານ ທີ່ກ່ຽວຂ້ອງຂອງ ສານປະຊາຊົນສູງສຸດ; ຫົວໜ້າ, ຮອງຫົວໜ້າ ຂອງອົງການໄອຍະການປະຊາຊົນສູງສຸດ ແລະ ຫົວໜ້າ, ຮອງຫົວໜ້າ ກົມທີ່ກ່ຽວຂ້ອງຂອງ ອົງການໄອຍະການປະຊາຊົນສູງສຸດ; ຮອງຫົວໜ້າຫ້ອງວ່າການສຳນັກງານປະທານປະເທດ; ຮອງລັດຖະມົນຕີ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ; ຮອງປະທານອົງການກວດກາແຫ່ງລັດ ແລະ ກົມທີ່ກ່ຽວຂ້ອງ; ຮອງລັດຖະມົນຕີກະຊວງຍຸຕິທຳ ແລະ ກົມທີ່ກ່ຽວຂ້ອງ, ຮອງລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ; ຮອງລັດຖະມົນຕີກະຊວງປ້ອງກັນປະເທດ, ຄະນະບໍດີ ຄະນະນິຕິສາດ-ລັດຖະສາດ, ຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ປະທານ ສະພາທະນາຍຄວາມ, ປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ.

**6.3. ບາດກ້າວທີສາມ: ສະຫຼຸບຕີລາຄາ ແລະ ລາຍງານ ຄະນະປະຈຳສະພາແຫ່ງຊາດ ເພື່ອຂໍທິດຊີ້ນຳ**

6.3.1. ຄະນະຮັບຜິດຊອບ ຈັດກອງປະຊຸມສະຫຼຸບຕີລາຄາ ແລະ ຖອດຖອນບົດຮຽນ ກ່ຽວກັບ ການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທຳ ຈຳນວນ 04 ສະບັບ;

6.3.2. ສະຫຼຸບສັງລວມ ແລະ ລາຍງານ ໃຫ້ຄະນະປະຈຳສະພາແຫ່ງຊາດ;

6.3.3. ກະກຽມເນື້ອໃນບົດປະກອບຄຳເຫັນ ຂອງຄະນະປະຈຳສະພາແຫ່ງຊາດ ຕໍ່ບົດລາຍງານ ຂອງ ສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທຳ ຈຳນວນ 04 ສະບັບ;

6.3.4. ກະກຽມຮ່າງມະຕິຂອງກອງປະຊຸມສະພາແຫ່ງຊາດ ວ່າດ້ວຍ ການຮັບຮອງການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທຳ ຈຳນວນ 04 ສະບັບ ຂອງ ສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ.

## 7. ການຈັດຕັ້ງປະຕິບັດ

7.1. ການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທຳ 04 ສະບັບ ໃຫ້ສຳເລັດບໍ່ໃຫ້ກາຍວັນທີ 30 ພຶດສະພາ 2023;

7.2. ຄະນະປະຈຳສະພາແຫ່ງຊາດຊີ້ນຳຄະນະຮັບຜິດຊອບຊີ້ນຳ ແລະ ກອງເລຂາ ເປັນເຈົ້າການຍົກສູງຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດຄຳແນະນຳສະບັບນີ້;

7.3. ບັນດາກຳມາທິການຂອງສະພາແຫ່ງຊາດ, ຄະນະເລຂາທິການສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະພາປະຊາຊົນຂັ້ນແຂວງ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ເປັນເຈົ້າການເຂົ້າຮ່ວມຈັດຕັ້ງປະຕິບັດຄຳແນະນຳສະບັບນີ້;

7.4. ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ຂະແໜງການ ແລະ ອົງການຂັ້ນສູນກາງ ແລະ ທ້ອງຖິ່ນ ເປັນເຈົ້າການປະສານສົມທົບຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ຕາມພາລະບົດບາດຂອງຕົນ.

7.5. ເພີ່ມທະວີການປະສານສົມທົບ ລະຫວ່າງ ຄະນະຮັບຜິດຊອບຊີ້ນຳ ແລະ ສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ໃນການຈັດຕັ້ງປະຕິບັດຄຳແນະນຳສະບັບນີ້.

## 8. ຜົນສັກສິດ

ຄຳແນະນຳສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຄະນະປະຈຳສະພາແຫ່ງຊາດ

ປະທານ

ປອ ໄຊສົມພອນ ພົມວິຫານ